ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງໄຊຍະບູລີ

ເລກທີ 04 /ສພຂ.ຊຍ

ໄຊຍະບູລີ, ວັນທີ 13 ມັງກອນ 2024

# ມະຕິ

## ກອງປະຊຸມສະພາປະຊາຊົນແຂວງ

## ວ່າດ້ວຍ ການຮັບຮອງເອົາ ບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2023, ຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2022 ແລະ ທິດທາງແຜນການເຄື່ອນໄຫວວຽກງານຢູ່ແຂວງໄຊຍະບູລີ ປີ 2024 ຂອງອົງການກວດສອບ ປະຈຳພາກເໜືອ1

- ອີງຕາມ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍ ສະພາປະຊາຊົນຂັ້ນແຂວງ, ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020, ມາດຕາ 12 ແລະ ມາດຕາ 59.
- ອີງຕາມ ບົດລາຍງານຂອງອົງການກວດສອບປະຈຳພາກເໜືອ1 ສະບັບເລກທີ 783/ອກສ.ພໜ1, ລົງວັນທີ 21 ທັນວາ 2023.

ຜ່ານການ ປະກອບຄຳເຫັນ, ຄົ້ນຄວ້າ ພິຈາລະນາ ຢ່າງເລິກເຊິ່ງ ຂອງ ສະມາຊິກສະພາປະຊາຊົນແຂວງ ຕໍ່ບົດລາຍງານ ການເຄື່ອນໄຫວວຽກງານ ປີ 2023, ຜົນການກວດສອບ ບົດສະຫຼຸບຂາດຕົວ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ຂອງແຂວງ ປະຈຳປີ 2022 ແລະ ທິດທາງແຜນການເຄື່ອນໄຫວວຽກງານກວດສອບຢູ່ແຂວງໄຊຍະບູລີ ປີ 2024 ຂອງອົງການກວດສອບປະຈຳພາກເໜືອ1. ໃນກອງປະຊຸມສະໄໝສາມັນ ເທື່ອທີ 6 ສະພາປະຊາຊົນແຂວງ ຊຸດທີ II.

## ກອງປະຊຸມຕົກລົງ:

**ມາດຕາ 1 ຮັບຮອງເອົາ ບົດລາຍງານ ການເຄື່ອນໄຫວວຽກງານຢູ່ແຂວງໄຊຍະບູລີ ຂອງອົງການກວດສອບປະຈຳພາກເໜືອ1 ປະຈຳປີ 2023 ແລະ ຜົນການກວດສອບ ບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2022**

1. **ການຈັດຕັ້ງປະຕິບັດ ແຜນການເຄື່ອນໄຫວວຽກງານ ຂອງອົງການກວດສອບປະຈຳພາກເໜືອ1 ປະຈຳປີ 2023**

ກອງປະຊຸມ ສະແດງຄວາມຊົມເຊີຍ ຕໍ່ອົງການກວດສອບປະຈຳພາກເໜືອ1 ທີ່ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານ ປະຈຳປີ 2023 ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ດ້ວຍຄວາມຮັບຜິດຊອບສູງ, ສຳເລັດການກວດສອບຢູ່ແຂວງໄຊຍະບູລີ ທັງໝົດ 2 ເປົ້າໝາຍ, ມີ 16 ຫົວໜ່ວຍ. ກອງປະຊຸມເຫັນດີເປັນ

ເອກະພາບຕໍ່ການຕີລາຄາ ດ້ານຄົງຄ້າງ ແລະ ສາເຫດ ໃນການເຄື່ອນໄຫວວຽກງານ ຂອງອົງການກວດສອບ ປະຈຳພາກເໜືອ1.

**2. ຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ**

**2.1 ຜົນການກວດສອບຄືນການຈັດຕັ້ງປະຕິບັດ ການແກ້ໄຂຜົນການກວດສອບ ຕາມມະຕິ ສະບັບເລກທີ 06/ສພຂ.ຊຍ, ລົງວັນທີ 16 ກຸມພາ 2023**

- **ດ້ານລາຍຮັບທີ່ກວດເຫັນເພີ່ມ:** ຍອດເຫຼືອລາຍຮັບທີ່ກວດເຫັນເພີ່ມ ບ້ວງສ່ວຍສາອາກອນ ຈຳນວນ 336,85 ລ້ານກີບ, ຊຶ່ງໄດ້ຮັບການແກ້ໄຂແລ້ວດ້ວຍຮູບການ: ມອບເຂົ້າງົບປະມານ ແລະ ຈົດຮັບ-ຈົດຈ່າຍ ຈຳນວນ 60,04 ລ້ານກີບ, ຍັງຄ້າງ ຈຳນວນ 276,80 ລ້ານກີບ;
- **ດ້ານລາຍຈ່າຍທີ່ກວດເຫັນເພີ່ມ:** ຈຳນວນ 63,33 ລ້ານກີບ ທີ່ຈ່າຍໃຫ້ເມືອງ ແມ່ນຍັງບໍ່ໄດ້ຖືກຫັກອອກຈາກແຜນງົບປະມານລັດ ປະຈຳປີ 2023 ຂອງຫົວໜ່ວຍງົບປະມານທີ່ໄດ້ຈ່າຍນອກແຜນ.

**2.2 ຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2022.**

**2.2.1 ບົດສະຫຼຸບຂາດຕົວງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2022.**

1) ດ້ານລາຍຮັບ: ປະຕິບັດໄດ້ ຈຳນວນ 277,50 ຕື້ກີບ, ເກີນແຜນ 34,40 ຕື້ກີບ ເທົ່າກັບ 114,15% ຂອງແຜນການປີ, ກວດສອບເຫັນລາຍຮັບເພີ່ມ ຈຳນວນ 0,27 ຕື້ກີບ, ລວມທັງໝົດ ຈຳນວນ 277,77 ຕື້ກີບ, ເພີ່ມຂຶ້ນ 0,10%;
2) ດ້ານລາຍຈ່າຍ: ລາຍຈ່າຍງົບປະມານແຫ່ງລັດ, ປະຕິບັດໄດ້ ຈຳນວນ 536,49 ຕື້ກີບ, ເທົ່າກັບ 99,95% ຂອງແຜນການປີ;
3) ການດຸ່ນດ່ຽງງົບປະມານ: ປະຕິບັດໄດ້ ຈຳນວນ 293,64 ຕື້ກີບ, ເທົ່າກັບ 100% ຂອງແຜນການປີ ແລະ ຈາກຜົນການກວດສອບເຫັນໄດ້ຕົວເລກຂາດດຸ່ນງົບປະມານຫຼຸດລົງ ຈຳນວນ 0,27 ຕື້ກີບ; ການດຸ່ນດ່ຽງງົບປະມານຕົວຈິງ ປີ 2022 ຈຳນວນ 293,37 ຕື້ກີບ, ເທົ່າກັບ 99,91% ຂອງແຜນການປີ, ຫຼຸດລົງ 0,09%.

**2.2.2 ຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2022.**

1) **ດ້ານລາຍຮັບ:** ຜ່ານການກວດສອບການຈັດຕັ້ງປະຕິບັດລາຍຮັບງົບປະມານແຫ່ງລັດ ປະຈຳປີ 2022 ກວດສອບເຫັນ ລາຍຮັບເພີ່ມ ທີ່ບໍ່ມອບເຂົ້າງົບປະມານ ຊຶ່ງຍັງຮັກສາໄວ້ຢູ່ໃນຄັງເງິນສົດ ແລະ ໄວ້ໃນລະບົບຄັງເງິນ ຈຳນວນ 276,80 ລ້ານກີບ ໃນນັ້ນ;
   - ລາຍຮັບສ່ວຍສາອາກອນ (ລາຍຮັບວິຊາການ) ຈຳນວນ 276,80 ລ້ານກີບ;
2) **ດ້ານລາຍຈ່າຍ:** ຜ່ານການກວດສອບການຈັດຕັ້ງປະຕິບັດລ່າຍຈ່າຍງົບປະມານແຫ່ງລັດ ປະຈຳປີ 2022 ກວດສອບບໍ່ມີລາຍຈ່າຍເພີ່ມ.
3) **ການຄຸ້ມຄອງລາຍຮັບ:**
   - ກວດສອບເຫັນລາຍຮັບເພີ່ມທີ່ບໍ່ມອບເຂົ້າງົບປະມານ ຊຶ່ງຍັງຮັກສາໄວ້ຢູ່ໃນຄັງເງິນສົດ ແລະ ໄວ້ໃນລະບົບຄັງເງິນ (ລາຍຮັບສ່ວຍສາອາກອນ) ຈຳນວນ 276,80 ລ້ານກີບ;
   - ກວດສອບເຫັນ ໜີ້ຕ້ອງຮັບສ່ວຍສາອາກອນປະຈຳແຂວງ ຈາກບັນດາຫົວໜ່ວຍທຸລະກິດທັງໝົດຈຳນວນ 3.706,10 ລ້ານກີບ;
   - ກວດສອບເຫັນໜີ້ຕ້ອງຮັບຂະແໜງຄຸ້ມຄອງຊັບສິນຂອງລັດ ຈຳນວນ 5.169,45 ລ້ານກີບ;

- ກວດສອບເຫັນໜີ້ຕ້ອງຮັບບັນດາຫົວໜ່ວຍງົບປະມານ ຈຳນວນ 877,59 ລ້ານກີບ;
- ກວດສອບເຫັນ ຂະແໜງຄຸ້ມຄອງຊັບສິນຂອງລັດ ຈັດເກັບລາຍຮັບຄ່າຊັບພະຍາກອນທຳມະຊາດ ນຳບັນດາຫົວໜ່ວຍທຸລະກິດ ທີ່ໄດ້ຮັບໃບອະນຸຍາດສຳຫຼວດ-ຂຸດຄົ້ນຫີນ ຍັງບໍ່ຄົບຖ້ວນຕາມສັນຍາ ຈຳນວນ 1.990,17 ລ້ານກີບ;
- ກວດສອບເຫັນ ຂະແໜງຄຸ້ມຄອງຊັບສິນຂອງລັດ ໄດ້ຈັດເກັບລາຍຮັບຈາກຄ່າເຊົ່າ-ສຳປະທານ ນຳບັນດາຫົວໜ່ວຍທຸລະກິດ ບໍ່ຄົບຖ້ວນຕາມສັນຍາ ຈຳນວນ 229,71 ລ້ານກີບ.

4) ການຄຸ້ມຄອງລາຍຈ່າຍ:

- ກວດສອບເຫັນ ລາຍຈ່າຍລ່ວງໜ້າຄ້າງ ໃນລະບົບຄັງເງິນປະຈຳແຂວງ ທີ່ບໍ່ໄດ້ຮັບການຊຳລະສະສາງ ສະສົມຜ່ານມາຮອດປີ 2021 ຈຳນວນ 31.063,10 ລ້ານກີບ, ໃນນັ້ນ: ຈ່າຍລ່ວງໜ້າໃນແຜນ (ບັນຊີ 546) ຈຳນວນ 23.392,06 ລ້ານກີບ ແລະ ຈ່າຍລ່ວງໜ້ານອກແຜນ (ບັນຊີ 488) ຈຳນວນ 7.671,044 ລ້ານກີບ.

5) ການຄຸ້ມຄອງໂຄງການລົງທຶນຂອງລັດ.

- ກວດສອບເຫັນ ພະແນກໂຍທາທິການ ແລະ ຂົນສົ່ງ, ພະແນກພະລັງງານ ແລະ ບໍ່ແຮ່ ມີມູນຄ່າການຊຳລະໂຄງການຕົວຈິງ ຜິດດ່ຽງກັບແຜນການລົງທຶນຂອງລັດ ຂອງກະຊວງແຜນການ ແລະ ການລົງທຶນ ຈຳນວນ 4 ໂຄງການ ມູນຄ່າຜິດດ່ຽງ ຈຳນວນ 538,38 ລ້ານກີບ;
- ກວດສອບເຫັນ ພະແນກແຜນການ ແລະ ການລົງທຶນ ເຊັນບົດບັນທຶກຄວາມເຂົ້າໃຈ (MOU) ທີ່ແຂວງ ອະນຸມັດໃນກິດຈະການເຊົ່າ-ສຳປະທານ ຈຳນວນ 1 ໂຄງການ ແຕ່ບໍລິສັດຍັງບໍ່ໄດ້ວາງເງິນຄ້ຳປະກັນຕາມສັນຍາ ທັງໝົດຈຳນວນ 10.000 ໂດລາສະຫະລັດ;
- ກວດສອບເຫັນ ການທັນຊັບສິນເປັນທຶນ ເພື່ອໄປຊຳລະໂຄງການນອກແຜນ ແລະ ຍັງບໍ່ໄດ້ສະເໜີໃຫ້ສະພາປະຊາຊົນແຂວງພິຈາລະນາ ມູນຄ່າ 3.842,70 ລ້ານກີບ.

6) ການຄຸ້ມຄອງຊັບສິນຂອງລັດ.

- ກວດສອບເຫັນ ພາສີປະຈຳແຂວງ ຍຶດພາຫະນະລົດໃຫຍ່ລັກລອບນຳເຂົ້າໜີພາສີ ເປັນຂອງລັດ ຍັງບໍ່ທັນໄດ້ປະມູນຂາຍຕາມລະບຽບການ ຈຳນວນ 2 ຄັນ;
- ກວດສອບເຫັນຂະແໜງຄຸ້ມຄອງຊັບສິນຂອງລັດ (ພະແນກການເງິນ) ມີຊັບສິນປະເພດພາຫະນະທີ່ຖືກຮິບເປັນຂອງລັດ ຍັງບໍ່ໄດ້ປະມູນຂາຍ ເພື່ອມອບເຂົ້າງົບປະມານແຫ່ງລັດ ມີປະເພດລົດໃຫຍ່ຈຳນວນ 2 ຄັນ ແລະ ລົດຈັກ 16 ຄັນ.

7) ການຄຸ້ມຄອງການເກັບລາຍຮັບສ່ວຍສາອາກອນ.

- ກວດສອບເຫັນ ສ່ວຍສາອາກອນປະຈຳແຂວງ ມີຫົວໜ່ວຍທຸລະກິດຄ້າງບໍ່ ມາຍື່ນເອກະສານລາຍງານການເງິນ ຕາມສະຖິຕິຖານຂໍ້ມູນລາຍຮັບໃນລະບົບ TaxRis ຈຳນວນ 195 ຫົວໜ່ວຍ;
- ກວດສອບເຫັນ ສ່ວຍສາອາກອນປະຈຳແຂວງ ບໍ່ໄດ້ນຳໃຊ້ມາດຕະການປັບໃໝຫົວໜ່ວຍທຸລະກິດ ແຈ້ງມອບອາກອນບໍ່ຄົບຖ້ວນ ຈຳນວນ 17 ຫົວໜ່ວຍ.

**2.3 ຜົນການກວດສອບຄືນ ການຈັດຕັ້ງປະຕິບັດແກ້ໄຂຜົນການກວດສອບຕາມມະຕິເລກທີ 06/ສພຂ.ຂຍ , ລົງວັນທີ 16/2/2023.**

ຜ່ານການກວດສອບຄືນຕາມມະຕິສະພາປະຊາຊົນແຂວງ ໄດ້ມີມະຕິຕົກລົງຮັບຮອງເອົາມາດຕະການແກ້ໄຂຜົນການກວດສອບ ສະເພາະບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ

ຈຳນວນ 12 ມາດຕະການ, ໄດ້ຮັບການປັບປຸງແກ້ໄຂມີ 1 ມາດຕະການ, ໄດ້ຮັບການແກ້ໄຂບໍ່ທັນຂາດຕົວມີ 10 ມາດຕະການ ແລະ ບໍ່ໄດ້ຮັບການປັບປຸງແກ້ໄຂມີ 1 ມາດຕະການ.

**ມາດຕາ 2 ຮັບຮອງເອົາ ທິດທາງແຜນການເຄື່ອນໄຫວວຽກງານຢູ່ແຂວງໄຊຍະບູລີ ປີ 2024 ຂອງອົງການກວດສອບປະຈຳພາກເໜືອ1**

ກອງປະຊຸມຮັບຮອງເອົາ ແຜນການເຄື່ອນໄຫວ ວຽກງານກວດສອບ ປີ 2024 ຢູ່ ແຂວງໄຊຍະບູລີ ມີ 03 ເປົ້າໝາຍ ຄື:

1. ກວດສອບປິດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານ ປະຈຳປີ 2023 ລວມມີ 15 ຫົວໜ່ວຍຄື: (1) ຫ້ອງວ່າການແຂວງ; (2) ຂະແໜງຄຸ້ມຄອງຊັບສິນຂອງລັດ; (3) ຄັງເງິນແຫ່ງຊາດປະຈຳແຂວງ; (4) ພະແນກ ແຜນການ ແລະ ການລົງທຶນ; (5) ພະແນກ ໂຍທາທິການ ແລະ ຂົນສົ່ງ; (6) ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ; (7) ພະແນກ ກະສິກຳ ແລະ ປ່າໄມ້; (8) ພະແນກ ອຸດສາຫະກຳ ແລະ ການຄ້າ; (9) ພະແນກ ແຮງງານ ແລະ ສະຫວັດດີການ-ສັງຄົມ; (10) ພະແນກ ສຶກສາທິການ ແລະ ກິລາ; (11) ພະແນກ ສາທາລະນະສຸກ; (12) ພະແນກ ພະລັງງານ ແລະ ບໍ່ແຮ່; (13) ພະແນກ ຍຸຕິທຳ (14) ພະແນກ ການເງິນແຂວງ (ຂະແໜງງົບປະມານ); (15)ໂຮງໝໍແຂວງ.
2. ກວດສອບວຽກງານສ່ວຍສາອາກອນປະຈຳແຂວງໄຊຍະບູລີ.
3. ກວດສອບວຽກງານເກັບລາຍຮັບພາສີປະຈຳແຂວງໄຊຍະບູລີ.

**ມາດຕາ 3 ຮັບຮອງເອົາ ມາດຕະການຈັດຕັ້ງປະຕິບັດວຽກງານ ຂອງ ອົງການກວດສອບປະຈຳພາກເໜືອ1 ຢູ່ແຂວງໄຊຍະບູລີ**

ກອງປະຊຸມຮັບຮອງເອົາ 15 ມາດຕະການ ແນະນຳປັບປຸງແກ້ໄຂຜົນການກວດສອບ ຕາມການສະເໜີຂອງອົງການກວດສອບປະຈຳພາກເໜືອ1, ໃນນີ້: ມາດຕະການທາງດ້ານເສດຖະກິດມີ 4 ມາດຕະການ; ມາດຕະການປັບປຸງແກ້ໄຂທາງດ້ານນິຕິກຳມີ 1 ມາດຕະການ ແລະ ມາດຕະການດ້ານຄວາມຮັບຜິດຊອບແຕ່ລະຂັ້ນມີ 10 ມາດຕະການ. ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວດັ່ງກ່າວ ບັນລຸຕາມຈຸດປະສົງທີ່ວາງໄວ້, ກອງປະຊຸມສະເໜີໃຫ້ເອົາໃຈໃສ່ບາງມາດຕະການເພີ່ມເຕີມດັ່ງນີ້:

**1. ອົງການປົກຄອງແຂວງ**

1.1 ນຳພາແກ້ໄຂຜົນການກວດສອບໃຫ້ເປັນຮູບປະທຳຂຶ້ນກວ່າເກົ່າ ແລະ ຖືເອົາຜົນການແກ້ໄຂການກວດສອບເປັນມາດຕະຖານໃນການປະເມີນບຸກຄະລາກອນທີ່ ສະພາປະຊາຊົນຂັ້ນແຂວງ ເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ ພ້ອມທັງລາຍງານ ຄະນະປະຈຳສະພາປະຊາຊົນແຂວງ ເປັນແຕ່ລະໄລຍະ;

1.2 ຊີ້ນຳພະແນກການເງິນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເກັບກູ້ລາຍຮັບທີ່ກວດເຫັນເພີ່ມ ເຂົ້າງົບປະມານ ປີ 2024; ປະສານສົມທົບກັບອົງການກວດສອບພາກເໜືອ1 ວິເຄາະ-ວິໄຈ, ໄຈ້ແຍກລາຍຮັບ, ລາຍຈ່າຍ, ໜີ້ຕ້ອງຮັບ, ໜີ້ຕ້ອງສົ່ງ, ຈ່າຍລ່ວງໜ້າຄັງເງິນແຫ່ງຊາດ ທີ່ສະສົມຜ່ານມາໃຫ້ລະອຽດອັນໃດຍັງສາມາດເກັບຄືນໄດ້ ແລະ ອັນໃດບໍ່ສາມາດເກັບຄືນໄດ້ ຫຼື ບໍ່ມີຕົວຕົນແລ້ວ ໃຫ້ລາຍງານທ່ານເຈົ້າແຂວງຄົ້ນຄວ້າ ເພື່ອສະເໜີຫາຄະນະປະຈຳສະພາປະຊາຊົນແຂວງ ພິຈາລະນາ;

1.3 ສືບຕໍ່ຊີ້ນຳບັນດາພະແນກການ, ອົງການທີ່ກ່ຽວຂ້ອງ ໃຫ້ເພີ່ມຄວາມຮັບຜິດຊອບໃນການຮ່ວມມື, ປະສານສົມທົບ, ອຳນວຍຄວາມສະດວກ, ສະໜອງເອກະສານ, ຂໍ້ມູນ ແລະ ຕັ້ງໜ້າແກ້ໄຂຜົນການກວດສອບຕາມກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ລັດໄດ້ວາງອອກໃຫ້ເຂັ້ມງວດ.

**2. ອົງການກວດສອບປະຈຳພາກເໜືອ1**

2.1 ເປັນເຈົ້າການປະສານສົມທົບ ກັບ ອົງການຄຸ້ມຄອງເປົ້າໝາຍຖືກກວດສອບ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຊຸກຍູ້ເປົ້າໝາຍຖືກກວດສອບແກ້ໄຂຜົນການກວດສອບໃນໄລຍະຜ່ານມາ ໃຫ້ເຂັ້ມ

ງວດ ແລະ ເດັດຂາດ ຕາມມາດຕາ 40 ຂອງກົດໝາຍວ່າດ້ວຍ ການກວດສອບແຫ່ງລັດ. ພ້ອມທັງໄຈ້ແຍກໃຫ້ເຫັນ ອັນໃດທີ່ສາມາດແກ້ໄຂໄດ້, ອັນໃດເປັນໜີ້ທວງຍາກ ແລະ ອັນໃດທີ່ບໍ່ສາມາດແກ້ໄຂໄດ້ ຫຼື ບໍ່ມີຕົວຕົນ ໃຫ້ລະອຽດ ແລ້ວນຳສະເໜີ ຄະນະປະຈຳສະພາປະຊາຊົນແຂວງ ພິຈາລະນາ;

2.2 ສືບຕໍ່ຈັດຕັ້ງປະຕິບັດ ກົນໄກປະສານງານຢ່າງເປັນປົກກະຕິ ລະຫວ່າງ ອົງການກວດສອບປະຈຳພາກເໜືອ1 ກັບ ສະພາປະຊາຊົນແຂວງ, ອົງການກວດກາລັດແຂວງ ແລະ ບັນດາເປົ້າໝາຍຖືກກວດສອບໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ເພື່ອແນໃສ່ແກ້ໄຂຜົນການກວດສອບໃຫ້ມີຄວາມສັກສິດ.

**ມາດຕາ 4 ການຈັດຕັ້ງປະຕິບັດ.**

1. ມອບໃຫ້ ອົງການປົກຄອງແຂວງ ນຳພາ-ຊີ້ນຳ ບັນດາຂະແໜງການທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດມາດຕະການແນະນຳແກ້ໄຂຜົນການກວດສອບ ຕາມມະຕິສະບັບນີ້ຢ່າງເຂັ້ມງວດ;
2. ມອບໃຫ້ ອົງການກວດສອບປະຈຳພາກເໜືອ1 ເປັນເຈົ້າການຈັດຕັ້ງປະຕິບັດ ມະຕິສະບັບນີ້ຢ່າງເຂັ້ມງວດ;
3. ມອບໃຫ້ ຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ, ບັນດາຄະນະກຳມະການ, ຄະນະເລຂາທິການ, ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ຕິດຕາມກວດກາ ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 5 ຜົນສັກສິດ**

ມະຕິສະບັບນີ້, ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານສະພາປະຊາຊົນແຂວງ

ເພັງນິລັນ ຄຳພັນເພັງ